ພວກພີ່ນ້ອງກຣິສຕັງທີ່ຮັກແພງ.

ຍ້ອນພວກເຮົາເຊື່ອ, ຮັກແລະຫວັງ ພວກເຮົາຈຶ່ງສັກກາຣະບູຊາ ອຸທິດຕົນ ເພື່ອພຣະເຈົ້າ ຜູ້ເປັນບິດາ ຜູ້ເປັນກົກແລະປາຍ ທັງເປັນຍອດຄວາມສຸກ ຂອງ ມະນຸດ.

ການພາວະນາແລະຖວາຍມະຫາບູຊາແດ່ພຣະເຈົ້າ ເປັນກິຈການ ຈຳເປັນ ແລະສຳຄັນສຳລັບຊີວິດເປັນລູກພຣະເຈົ້າ, ແລະຕາມຄວາມຮຽກຮ້ອງ ຕ້ອງການ ຂອງຊາວກຣິສຕະຊົນລາວທີ່ປະເທດຝຣັ່ງເສດ, ພວກເຮົາຍິນດີ ຂໍສເນີ ບົດເພງ ສັກສິດຕ່າງ ໆ ເພື່ອຊ່ວຍພວກພີ່ນ້ອງໃນໂອກາດ ພາວະນາຕອນເຊົ້າ ແລະຄ່ຳ ພາຍໃນຄອບຄົວ, ສ່ວນຕົວ ຫລື ຮ່ວມກັບພີ່ນ້ອງກຣິສຕັງ ແລະ ເປັນຕົ້ນ ໃນໂອ ກາດຖວາຍມະຫາບູຊາ ເພື່ອໃຫ້ໄດ້ສັນຣະເສີນພຣະເຈົ້າ ໃນພາສາ ຂອງ ພວກ ພີ່ນ້ອງ ເອງ.

ຫວັງວ່າບົດເພງສັກສິດນີ້ ຈະຊ່ວຍໃຫ້ພວກພີ່ນ້ອງໄດ້ບູຊາສັນຣະເສີນ ພຣະ ເຈົ້າ ຢ່າງສວ່າງ ແລະ ສັດທາຕື່ມຂຶ້ນ.

"ພວກພີ່ນ້ອງຜູ້ພຣະເປັນເຈົ້າ ຊົງເລືອກສັນ, ຜູ້ສັກສິດຂອງພຣະເຈົ້າແລະ ຜູ້ທີ່ພຣະອົງຊົງຮັກຫອມທັງຫລາຍ, ຈົ່ງຮູ້ຈັກສົມມະນາຄຸນ ພຣະເປັນເຈົ້າ, ຈົ່ງ ສັນຣະເສີນພຣະເຈົ້າ ດ້ວຍບົດເພງສັກສິດ ບົດສະດຸດີ, ບົດຮ້ອງຕ່າງ ໆ ຕາມ ທີ່ ພຣະຈິດເຈົ້າບັນດົນ." (ຈົດຫມາຍ ເຖິງຊາວ ໂກໂລຊາ 3/12...16)

ຊຸມພໍ່ຜູ້ອະພິບານ ຊາວກາໂທລິກລາວ
ທີ່ປະເທດ ຝຣັ່ງເສດ.

DELEGATION CATHOLIQUE LAOTIENNE
Délégué National